ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ເລກທີ 28579 /ຍທຂ
ນະຄອນຫຼວງວຽງຈັນ, ວັນທີ 17 ພະຈິກ 2026

ຄຳແນະນຳ
ກ່ຽວກັບ ການເຂົ້າ-ອອກ ທ່າບົກ

- ອີງຕາມ ດຳລັດ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບ ເລກທີ 677/ນຍ, ລົງວັນທີ 21 ທັນວາ 2021;
- ອີງຕາມ ດຳລັດ ວ່າດ້ວຍ ທ່າບົກ ສະບັບເລກທີ 298/ລບ, ລົງວັນທີ 05 ມິຖຸນາ 2024;
- ອີງຕາມ ສັນຍາການຂົນສົ່ງ ທີ່ ສປປ ລາວ ເປັນພາຄີ;
- ອີງຕາມ ໜັງສືສະເໜີ ຂອງ ກົມຂົນສົ່ງ ສະບັບເລກທີ 22854/ກຂສ, ລົງວັນທີ 21 ກັນຍາ 2026;
- ອີງຕາມ ການຕົກລົງເຫັນດີ ຂອງກອງປະຊຸມລັດຖະມົນຕີ-ຄະນະປະຈຳພັກ ກະຊວງ ຍທຂ ເພື່ອແກ້ໄຂວຽກ ວິຊາສະເພາະຄັ້ງທີ 19 ວັນທີ 4 ພະຈິກ 2026.

ລັດຖະມົນຕີ ອອກຄຳແນະນຳ:

I. ຈຸດປະສົງ.

ເພື່ອຜັນຂະຫຍາຍເນື້ອໃນ ມາດຕາ 14 ການເຂົ້າ-ອອກ ທ່າບົກ ຂອງ ດຳລັດ ວ່າດ້ວຍທ່າບົກ ສະບັບເລກທີ 298/ລບ, ລົງວັນທີ 05 ມິຖຸນາ 2024 ແລະ ອຳນວຍຄວາມສະດວກ ແກ່ຍານພາຫະນະຂົນສົ່ງສິນຄ້າ ທີ່ ກຳນົດ ໄວ້ໃນ ສົນທິສັນຍາ ແລະ ສັນຍາສາກົນ ດ້ານການຂົນສົ່ງທາງບົກ ທີ່ ສປປ ລາວ ເປັນພາຄີ ໃຫ້ລະອຽດ, ຈະແຈ້ງ, ເຂົ້າໃຈງ່າຍ ແລະ ສາມາດຈັດຕັ້ງປະຕິບັດ ຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ;

ເພື່ອໃຫ້ອົງການຈັດຕັ້ງລັດແຕ່ລະຂັ້ນທີ່ເຮັດໜ້າທີ່ຄຸ້ມຄອງ, ຜູ້ຜັດທະນາທ່າບົກ, ຜູ້ລົງທຶນກິດຈະການໃນ ຂອບເຂດຂອງທ່າບົກ ແລະ ຜູ້ດຳເນີນການຂົນສົ່ງ ເຂົ້າໃຈຖືກຕ້ອງ, ຄົບຖ້ວນ ແລະ ເລິກເຊິ່ງ ກ່ຽວກັບ ການເຂົ້າ-ອອກ ທ່າບົກ ຂອງຍານພາຫະນະຂົນສົ່ງສິນຄ້າ ໃຫ້ມີຄວາມເປັນເອກະພາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

II. ເນື້ອໃນ

1. ມາດຕາ 14 ການເຂົ້າ-ອອກ ທ່າບົກ.

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ກຳນົດເສັ້ນທາງ, ຍານພາຫະນະ ທີ່ເຂົ້າ-ອອກ ທ່າບົກ ແລະ ສາຍ ທາງຂົນສົ່ງສິນຄ້າ ໄປຫາຈຸດປາຍທາງ ຂອງການຂົນສົ່ງຫຼາຍຮູບແບບ ຕາມສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ ແມ່ນໃຫ້ປະຕິບັດ ດັ່ງນີ້:

1.1. ຍານພາຫະນະຂົນສົ່ງຕ່າງປະເທດ ທີ່ມາສົ່ງສິນຄ້າ.

ຍານພາຫະນະຂົນສົ່ງຕ່າງປະເທດ ທີ່ມາສົ່ງສິນຄ້າ ຕ້ອງປະຕິບັດ ດັ່ງນີ້:

1) ແຈ້ງຂໍ້ມູນຂົນສົ່ງລ່ວງໜ້າ ແລະ ມີເອກະສານປະຈຳຍານພາຫະນະ ທີ່ກ່ຽວຂ້ອງຄົບຖ້ວນ ຕາມສັນຍາ ແລະ ສົນທິສັນຍາສາກົນ ດ້ານການຂົນສົ່ງ ທີ່ ສປປ ລາວ ເປັນພາຄີ;

2) ແຈ້ງເອກະສານຂາເຂົ້າ ຕໍ່ເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ ແລະ ເຈົ້າໜ້າທີ່ພາສີ ປະຈຳຢູ່ທ່າບົກ ຕາມເງື່ອນໄຂຈຸດພິເສດຂອງແຕ່ລະທ່າບົກ;

3) ຜູ້ຂັບຂີ່ ນຳຍານພາຫະນະຂອງຕົນ ໄປຈອດ ຢູ່ສະຖານທີ່ກວດກາສິນຄ້າຕົວຈິງ ທີ່ກຳນົດໄວ້ ເພື່ອ ລໍຖ້າດຳເນີນການກວດກາຕາມລະບຽບການທາງພາສີ;

4) ຍານພາຫະນະຂົນສົ່ງ ທີ່ມາສົ່ງສິນຄ້າ ທີ່ບໍ່ໄດ້ກຳນົດ ສາຍທາງ ແລະ ປາຍທາງ ຕາມ ສົນທິສັນຍາ ແລະ ສັນຍາສາກົນ ດ້ານການຂົນສົ່ງທາງບົກ ທີ່ ສປປ ລາວ ເປັນພາຄີ ໃຫ້ ສັບປ່ຽນ ຫົວລາກ-ຫາງລາກ ແລະ ຄ່ຽນ ຖ່າຍຢູ່ທ່າບົກ. ສ່ວນວິທີຄ່ຽນຖ່າຍ, ສັບປ່ຽນ ຫົວລາກ-ຫາງລາກ ໃຫ້ປະຕິບັດ ຕາມລະບຽບການຂອງທ່າບົກ.

1.2. ຍານພາຫະນະຂົນສົ່ງຕ່າງປະເທດທີ່ມາຮັບສິນຄ້າຢູ່ທ່າບົກ.

ຍານພາຫະນະຂົນສົ່ງຕ່າງປະເທດ ທີ່ມາຮັບສິນຄ້າຢູ່ທ່າບົກ ຕ້ອງປະຕິບັດ ດັ່ງນີ້:

1) ແຈ້ງຂໍ້ມູນຂົນສົ່ງລ່ວງໜ້າຕໍ່ທ່າບົກ ທີ່ມີລາຍລະອຽດ ສິນຄ້າ ແລະ ຜູ້ສົ່ງອອກ ທີ່ໄດ້ຮັບການ ຢືນຢັນ ປະຈຳຍານພາຫະນະ ແລະ ເອກະສານອື່ນ ທີ່ກ່ຽວຂ້ອງ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ຕາມສັນຍາ ແລະ ສົນທິສັນຍາສາກົນ ຂອງການຂົນສົ່ງທາງບົກ ທີ່ ສປປ ລາວ ເປັນພາຄີ;

2) ແຈ້ງເອກະສານຂາເຂົ້າ ຕໍ່ເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ ແລະ ເຈົ້າໜ້າທີ່ພາສີ ປະຈຳຢູ່ທ່າບົກ ຕາມເງື່ອນໄຂຈຸດພິເສດຂອງແຕ່ລະທ່າບົກ;

3) ຜູ້ຂັບຂີ່ ນຳຍານພາຫະນະຂອງຕົນ ໄປຈອດຢູ່ສະຖານທີ່ກວດກາສິນຄ້າຕົວຈິງ ທີ່ກຳນົດໄວ້ ເພື່ອ ລໍຖ້າ ການບັນຈຸສິນຄ້າຂຶ້ນພາຫະນະ ແລະ ດຳເນີນການກວດກາຕາມລະບຽບການທາງພາສີ;

4) ແຈ້ງເອກະສານຂາອອກ ຕໍ່ເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ ແລະ ເຈົ້າໜ້າທີ່ພາສີ ຕາມ ເງື່ອນໄຂຈຸດພິເສດຂອງແຕ່ລະທ່າບົກ ພາຍຫຼັງທີ່ໄດ້ຮັບສິນຄ້າແລ້ວ.

2. ຍານພາຫະຂົນສົ່ງສິນຄ້າ ທີ່ເຂົ້າ-ອອກ ທ່າບົກ.

ປະເພດ ແລະ ມາດຕະຖານ ຂອງຍານພາຫະນະຂົນສົ່ງສິນຄ້າ ທີ່ອະນຸຍາດໃຫ້ ເຂົ້າ-ອອກ ທ່າບົກ ທີ່ມີ ໜ່ວຍງານລັດ (ກວດຄົນ ເຂົ້າ-ອອກເມືອງ ແລະ ພາສີ) ປະຈຳຢູ່ທ່າບົກ ຕາມເງື່ອນໄຂຈຸດພິເສດຂອງແຕ່ລະທ່າບົກ ປະກອບມີ ດັ່ງນີ້:

ລ/ດ	ປະເພດລົດ	ຂະໜາດ			ລໍ້	ເພົາ
		ກວ້າງ (ມ)	ສູງ (ມ)	ຍາວ (ມ)		
1	ລົດຂົນສົ່ງ ບັນທຸກດ່ຽວ	ບໍ່ເກີນ 2,50	ບໍ່ເກີນ 4,50	ບໍ່ເກີນ 12,20	ແຕ່ 4 ຫາ 12	ແຕ່ 2 ຫາ 4
2	ລົດຂົນສົ່ງ ບັນທຸກເຄື່ອງຫາງລາກ	ບໍ່ເກີນ 2,50	ບໍ່ເກີນ 4,50	ບໍ່ເກີນ 16,00	ແຕ່ 10 ຫາ 22	ແຕ່ 3 ຫາ 6
3	ຫາງລາກ	ບໍ່ເກີນ 2,50	ບໍ່ເກີນ 4,50	ບໍ່ເກີນ 16,00	ແຕ່ 4 ຫາ 12	ແຕ່ 1 ຫາ 3
4	ລົດຂົນສົ່ງ ນ້ຳມັນເຊື້ອໄຟ	ບໍ່ເກີນ 2,50	ບໍ່ເກີນ 4,50	ບໍ່ເກີນ 12,20	ແຕ່ 8 ຫາ 12	ແຕ່ 2 ຫາ 4
5	ລົດຂົນສົ່ງທາດເຄມີ ຫຼື ທາດແຫຼວ	ບໍ່ເກີນ 2,50	ບໍ່ເກີນ 4,50	ບໍ່ເກີນ 12,20	ແຕ່ 8 ຫາ 12	ແຕ່ 2 ຫາ 4

ໝາຍເຫດ: ສຳລັບປະເພດລົດຂົນສົ່ງ ລຳດັບທີ 4 ແລະ 5 ທີ່ ຜ່ານຂະບວນການແຈ້ງເອກະສານ ທີ່ດ່ານສາກົນ ຈາກຕົ້ນທາງ ແມ່ນບໍ່ຈຳເປັນຕ້ອງເຂົ້າທ່າບົກ.

3. ທາງຫຼວງແຫ່ງຊາດ ແລະ ສາຍທາງຂົນສົ່ງສິນຄ້າ.

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ກຳນົດສາຍທາງຂົນສົ່ງສິນຄ້າ ຕາມກອບສັນຍາຂົນສົ່ງທາງບົກ ສອງຝ່າຍ ແລະ ຫຼາຍຝ່າຍ ທີ່ ສປປ ລາວ ເປັນພາຄີ ໂດຍຜ່ານດ່ານສາກົນ ຊຶ່ງໄດ້ກຳນົດໄວ້ໃນຕາຕະລາງ ດັ່ງນີ້:

3.1. ສາຍທາງ ລາວ-ໄທ.

ລ/ດ	ທາງຫຼວງແຫ່ງຊາດ	ຕົ້ນທາງ	ທາງຜ່ານ	ປາຍທາງ
1	ເລກ 3	ຫ້ວຍຊາຍ	ນ້ຳທາ	ບໍ່ເຕັນ (ຊາຍແດນລາວ-ຈີນ)
	ເລກ 1	ນ້ຳທາ	ອຸດົມໄຊ	ເມືອງຂວາ (ຊາຍແດນ ລາວ-ຫວຽດນາມ)
2	13 ເໜືອ	ອຸດົມໄຊ	ຫຼວງພະບາງ-ວຽງຈັນ-ປາກຊັນ-ທ່າແຂກ-ສະຫວັນນະເຂດ-ປາກເຊ	ເວີນຄາມ (ຊາຍແດນ ລາວ-ກຳປູເຈຍ)
3	ເລກ 8	ບໍ່ລິຄຳໄຊ	ຫຼັກ 20	ນ້ຳພາວ (ຊາຍແດນ ລາວ-ຫວຽດນາມ)
4	ເລກ 9	ສະຫວັນນະເຂດ	ເຊໂນ-ເມືອງພີນ-ເຊໂປນ	ແດນສະຫວັນ (ຊາຍ ແດນລາວ-ຫວຽດນາມ)
5	ເລກ 10	ວັງເຕົ່າ		ປາກເຊ
6	ເລກ 12	ທ່າແຂກ	ມະຫາໄຊ-ຍົມມະລາດ	ຈາລໍ (ຊາຍແດນລາວ-ຫວຽດນາມ)
7	ເລກ 13 ໃຕ້ ແລະ ເລກ 18	ປາກເຊ		ອັດຕະປື (ຊາຍແດນ ລາວ-ຫວຽດນາມ

3.2. ສາຍທາງ ລາວ-ກຳປູເຈຍ.

ລ/ດ	ທາງຫຼວງແຫ່ງຊາດ	ຕົ້ນທາງ	ທາງຜ່ານ	ປາຍທາງ
1	13 ໃຕ້	ດ່ານຊາຍແດນໝອງ ນົກຂຽນ	ປາກເຊ-ສະຫວັນນະເຂດ-ທ່າແຂກ-ປາກຊັນ	ນະຄອນຫຼວງວຽງຈັນ
2	13 ເໜືອ	ນະຄອນຫຼວງວຽງຈັນ	ຫຼວງພະບາງ-ອຸດົມໄຊ-ບາເຕີ	ບໍ່ເຕັນ (ດ່ານຊາຍແດນ ລາວ-ຈີນ)
3	13 ໃຕ້	ດ່ານຊາຍແດນໝອງ ນົກຂຽນ	ປາກເຊ-ທາງເລກ 16 ປາກເຊ	ວັງເຕົ່າ (ຊາຍແດນ ລາວ-ໄທ)
4	13ໃຕ້	ດ່ານຊາຍແດນໝອງ ນົກຂຽນ	ປາກເຊ-ທາງເລກ 16ກ: ປາກເຊ-ອັດຕະປື-18ບ: ອັດຕະປື	ບ້ານແຮດ (ດ່ານຊາຍ ແດນລາວ-ຫວຽດນາມ)
5	13 ໃຕ້	ດ່ານຊາຍແດນໝອງ ນົກຂຽນ	ປາກເຊ-ສະຫວັນນະເຂດ-ທາງເລກ 9 ເຊໂນ	ແດນສະຫວັນ (ດ່ານ ຊາຍແດນລາວ-ຫວຽດນາມ)

6	13 ใต้	ด่านฉายแดนซอง ปิกฉรูน	ปากเฉ-สะหวันนะเฉด-ท่าแฉก-ทางเลก 12 ท่าแฉก-ยิมมะลาด	ทิ่งฉาม (ด่านฉายแดนลาว-ทวรูดนาม)

3.3. สายทาง ลาว-ทวรูดนาม.

ล/ด	ด่านลาว		ด่านทวรูดนาม	
	ชื่ด่าน	ชื่เสั้นทาง	ชื่ด่าน	ชื่เสั้นทาง
1	ปางทิก (ແຂວງຜົ້ງສາລີ)	2E	ໄຕຈາງ (ແຂວງດ້ຽນບຽນ)	ທາງຫຼວງແຫ່ງຊາດ 279
2	ບ້ານດ່ານ (ແຂວງຫົວພັນ)	6B	ຊຽງເຂື່ອງ (ແຂວງເຊີນລາ)	ທາງຂັ້ນແຂວງ 105
3	ປ່າຮ່າງ (ແຂວງຫົວພັນ)	6B	ລອງຊັບ (ແຂວງເຊີນລາ)	ທາງຫຼວງແຫ່ງຊາດ 43
4	ນ້ຳໂສຍ (ແຂວງຫົວພັນ)	6A	ນາແມວ (ແຂວງແທງຮວ່າ)	ທາງຫຼວງແຫ່ງຊາດ 217
5	ນ້ຳກັ່ນ (ແຂວງຊຽງຂວາງ)	7	ນ້ຳກັ່ນ (ແຂວງເຫງະອານ)	ທາງຫຼວງແຫ່ງຊາດ 7
6	ນ້ຳພາວ (ແຂວງບໍລິຄຳໄຊ)	8	ເກົາແຈ່ວ (ແຂວງຮ່າຕິງ)	ທາງຫຼວງແຫ່ງຊາດ 8
7	ນາເພົ້າ (ແຂວງຄຳມ່ວນ)	12	ຈໍລໍ (ແຂວງກວາງບິງ)	ທາງຫຼວງແຫ່ງຊາດ 12A
8	ແດນສະຫວັນ (ແຂວງສະຫວັນນະເຂດ)	9	ລາວບາວ (ແຂວງກວາງຈີ)	ທາງຫຼວງແຫ່ງຊາດ 9
9	ລະໄລ (ແຂວງສາລະວັນ)	15	ລະໄລ (ແຂວງກວາງຈີ)	ທາງຂັ້ນແຂວງ 15
10	ດາກຕາອອກ (ແຂວງເຊກອງ)	16B	ນາມຢາງ (ກວາງນາມ)	ທາງຫຼວງແຫ່ງຊາດ 14D
11	ພູເກືອ (ແຂວງອັດຕະປື)	18	ເບີອີ (ແຂວງກອນຕູມ)	ທາງຫຼວງແຫ່ງຊາດ 40
12	ນາຊອນ (ແຂວງຫຼວງພະບາງ)		ຫ້ວຍປວັກ (ແຂວງດ້ຽນບຽນ)	
13	ໂກຕາຍ (ແຂວງສາລະວັນ)		ຫົງເວີນ (ເທືອທຽນເຫວ້)	
14	ສົມຫວັງ (ແຂວງຫົວພັນ)	6B	ແຕນເຕັ້ນ (ແຂວງແທງຮວ່າ)	
15	ຕາວາງ (ແຂວງສາລະວັນ)		ອາເດີດ (ເທືອທຽນເຫວ້)	

ສຳລັບສາຍທາງຂົນສົ່ງສິນຄ້າທາງບົກສອງຝ່າຍ ລາວ-ຈີນ ໃຫ້ປະຕິບັດຕາມອະນຸສັນຍາຂົນສົ່ງທາງບົກລະຫວ່າງ ລາວ-ຈີນ.

ນ້ຳໜັກການບັນທຸກຂອງຍານພາຫະນະຂົນສົ່ງສິນຄ້າທຸກປະເພດ ທີ່ດຳເນີນການຂົນສົ່ງສິນຄ້າ ຢູ່ ສປປ ລາວ ຕ້ອງປະຕິບັດ ຕາມຂໍ້ຕົກລົງ ວ່າດ້ວຍ ການອະນຸຍາດນ້ຳໜັກລວມສູງສຸດຂອງລົດບັນທຸກ ສະບັບເລກທີ 9393/ຍທຂ, ລົງວັນທີ 13 ເມສາ 2023 ຢ່າງເຂັ້ມງວດ.

III. ການຈັດຕັ້ງປະຕິບັດ.

ມອບໃຫ້ ກົມຂົນສົ່ງ ເປັນເຈົ້າການປະສານສົມທົບກັບ ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ, ແຂວງ ທີ່ມີທ່າບົກ, ບັນດາດ່ານສາກົນ ທີ່ມີເຈົ້າໜ້າທີ່ ໂຍທາທິການ ແລະ ຂົນສົ່ງ ປະຈຳດ່ານ ພາຍໃຕ້ການແຕ່ງຕັ້ງ

ຈາກອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການ ໂຄສະນາ, ເຜີຍແຜ່, ແນະນຳ, ຕິດຕາມ ກວດກາ ແລະ ຈັດຕັ້ງປະຕິບັດ ຄຳແນະນຳສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

ໜ່ວຍງານໂຍທາທິການ ແລະ ຂົນສົ່ງ ປະຈຳທ່າບົກ, ຜູ້ພັດທະນາທ່າບົກ, ຜູ້ລົງທຶນກໍ່ຕະການໃນຂອບເຂດຂອງທ່າ ບົກ ແລະ ຜູ້ດຳເນີນການຂົນສົ່ງ ແຕ່ລະແຫ່ງ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ໃນ ການຈັດຕັ້ງປະຕິບັດ ຄຳແນະນຳສະບັບນີ້ ຢ່າງເຂັ້ມງວດ.

ໃນການຈັດຕັ້ງປະຕິບັດ ຄຳແນະນຳສະບັບນີ້ ຖ້າຫາກພົບຄວາມຫຍຸ້ງຍາກ ໃຫ້ລາຍງານກະຊວງໂຍທາທິ ການ ແລະ ຂົນສົ່ງ ຕາມຂັ້ນຕອນ ເພື່ອຄົ້ນຄວ້າ, ປັບປຸງ ແລະ ແກ້ໄຂ ໃຫ້ທັນເວລາ.

IV. ຜົນສັກສິດ.

ຄຳແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ

ລັດຖະມົນຕີ

ເຫລັກໄຫລ ສີວິໄລ

ເອກະສານຊ້ອນທ້າຍ 1
ເອກະສານປ່ອຍຍານພາຫະນະຂົນສົ່ງສິນຄ້າຜ່ານແດນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ໃບກຳນົດສາຍທາງຂອງຍານພາຫະນະຂົນສົ່ງສິນຄ້າຕ່າງປະເທດ

- ອີງຕາມ ໜັງສືອະນຸຍາດ ຈາກກົມຂົນສົ່ງສະບັບເລກທີ ...../ກຂສ, ລົງວັນ.....
- ອີງຕາມ ໃບສະເໜີ ຂອງບໍລິສັດສະບັບເລກທີ....., ລົງວັນທີ.....

ໜ່ວຍງານ ໂຍທາທິການ ແລະ ຂົນສົ່ງ ປະຈຳທ່າບົກ ຫຼື ດ່ານສາກົນ.....ກຳນົດສາຍທາງໃຫ້ ຍານພາຫະນະຂົນສົ່ງສິນຄ້າຕ່າງປະເທດ ຂອງ ບໍລິສັດ....., ແລ່ນເຂົ້າມາໃນດິນແດນ ຂອງ ສປປ ລາວ ຈຳນວນ..... ຄັນ ໂດຍມີກຳນົດໄລຍະເວລາ ແຕ່ວັນທີ ..... ຫາ ວັນທີ .....ຊຶ່ງມີລາຍລະອຽດ ດັ່ງນີ້:

ປ້າຍທະບຽນ ຍານພາຫະນະ	ປ້າຍທະບຽນທາງລາກ	ຈຳນວນເພົາ ແລະ ລໍ້ ຂອງ ຍານພາຫະນະ	ຈຳນວນເພົາ ແລະ ລໍ້ ທາງລາກ
1	1	1	1
2	2	2	2
3	3	3	3
ສາຍທາງຂອງ ຍານພາຫະນະ	ຈຸດເລີ່ມຕົ້ນ	ຈຸດຜ່ານ	ຈຸດໝາຍປາຍທາງ
ໄລຍະທາງ (ກມ)			

ໝາຍເຫດ: ຍານພະຫະນະທີ່ ກຳນົດໃນເອກະສານສະບັບນີ້ ສາມາດນຳໃຊ້ໄດ້ ພຽງຄັ້ງດຽວ.

ທີ່.....ວັນທີ.....ເດືອນ.....ປີ.....

ໜ່ວຍງານໂຍທາທິການ ແລະ ຂົນສົ່ງ

ໝາຍເຫດ: ທ່ານສາມາດດາວໂຫຼດ ເອກະສານຊ້ອນທ້າຍ 1 ແລະ 2 ດັ່ງລຸ່ມນີ້:

https://mpwt2023-my.sharepoint.com/:f:/g/personal/sc2_1_2_2_mpwt2023_onmicrosoft_com/EghmMydSigZDnYyRzWYk_TcB86RlowIKVu8xXmpFXUsqWw?e=sqUaWP